ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 140 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 18 ກຸມພາ 2026

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງການນຳເງິນສົດ
# ເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

## ຜູ້ວ່າການ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການນຳເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ເພື່ອຮັບປະກັນໃຫ້ການເຄື່ອນຍ້າຍເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ແລະ ພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ການຄຸ້ມຄອງການນຳເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ

ການຄຸ້ມຄອງການນຳເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ແມ່ນ ການຈັດຕັ້ງປະຕິບັດບັນດາຫຼັກການ, ລະບຽບການ ແລະ ມາດຕະການ ໃນການເຄື່ອນຍ້າຍເງິນສົດເງິນຕາຕ່າງປະເທດ ຈາກປະເທດໃດໜຶ່ງ ເຂົ້າ ສປປ ລາວ ຫຼື ຈາກ ສປປ ລາວ ໄປຕ່າງປະເທດ.

### ມາດຕາ 3 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ, ກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ທຫລ ປະຈຳພາກ ທີ່ເຄື່ອນໄຫວກ່ຽວຂ້ອງກັບການນຳເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ.

ຂໍ້ຕົກລົງສະບັບນີ້ ບໍ່ນຳໃຊ້ສຳລັບການນຳເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ຂອງ ທຫລ ແລະ ທະນາຄານທຸລະກິດ.

## ໝວດທີ 2
## ການນຳເງິນສົດເງິນຕາຕ່າງປະເທດເຂົ້າ ສປປ ລາວ

### ມາດຕາ 4 ການນຳເງິນສົດເງິນຕາຕ່າງປະເທດເຂົ້າ ສປປ ລາວ

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ສາມາດນຳເງິນສົດເງິນຕາຕ່າງປະເທດເຂົ້າ ສປປ ລາວ ໂດຍບໍ່ຈຳກັດຈຳນວນ. ໃນນັ້ນ, ການນຳເງິນສົດເງິນຕາຕ່າງປະເທດເຂົ້າ ສປປ ລາວ ທີ່ຕ້ອງແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ເພື່ອອອກເອກະສານຢັ້ງຢືນກ່ຽວກັບການນຳເງິນສົດເງິນຕາຕ່າງປະເທດເຂົ້າ ສປປ ລາວ ຕາມກໍລະນີ ດັ່ງນີ້:

1. ການນຳເງິນສົດເຂົ້າ ສປປ ລາວ ເກີນຈຳນວນ ສິບພັນ (10,000) ໂດລາສະຫະລັດ ຫຼື ທຽບເທົ່າ ຕໍ່ຄັ້ງ;
2. ການນຳເງິນສົດຂອງຜູ້ລົງທຶນຕ່າງປະເທດ ທີ່ມີຈຸດປະສົງນຳທຶນເຂົ້າມາລົງທຶນໂດຍກົງ ຢູ່ ສປປ ລາວ.

### ມາດຕາ 5 ການແຈ້ງການນຳເງິນສົດເງິນຕາຕ່າງປະເທດເຂົ້າ ສປປ ລາວ

ການແຈ້ງການນຳເງິນສົດເງິນຕາຕ່າງປະເທດເຂົ້າ ສປປ ລາວ ຕ້ອງປະກອບຂໍ້ມູນຕາມໃບແຈ້ງເຄື່ອງຂອງຕິດຕົວຜູ້ໂດຍສານ ຕາມແບບພິມ ແລະ ເອກະສານປະກອບ ທີ່ກະຊວງການເງິນກຳນົດ ແລ້ວຍື່ນຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ເພື່ອອອກເອກະສານຢັ້ງຢືນກ່ຽວກັບການນຳເງິນສົດເງິນຕາຕ່າງປະເທດເຂົ້າ ສປປ ລາວ ຕາມລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 3
## ການນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ

### ມາດຕາ 6 ການນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ສາມາດນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ໂດຍບໍ່ຈຳກັດຈຳນວນ. ໃນນັ້ນ, ການນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ເກີນຈຳນວນ ສິບພັນ (10,000) ໂດລາສະຫະລັດ ຫຼື ທຽບເທົ່າ ຕໍ່ຄັ້ງ ຕ້ອງຂໍອະນຸຍາດ ກ່ອນນຳເງິນສົດດັ່ງກ່າວອອກ ສປປ ລາວ.

### ມາດຕາ 7 ການຂໍອະນຸຍາດ

ຜູ້ມີ ແລະ ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ທີ່ມີຈຸດປະສົງນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ເກີນຈຳນວນທີ່ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ຕ້ອງຂໍອະນຸຍາດນຳ ກົມຄຸ້ມຄອງເງິນຕາຕ່າງປະເທດ ຫຼື ທຫລ ປະຈຳພາກ.

ຜູ້ທີ່ມີເອກະສານຢັ້ງຢືນກ່ຽວກັບການນຳເງິນສົດເງິນຕາຕ່າງປະເທດເຂົ້າ ສປປ ລາວ ສາມາດແຈ້ງເອກະສານຢັ້ງຢືນດັ່ງກ່າວ ຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ເພື່ອເປັນຫຼັກຖານໃນການນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ໃນຈຳນວນເງິນ ທີ່ບໍ່ເກີນຈຳນວນທີ່ໄດ້ກຳນົດໄວ້ໃນເອກະສານຢັ້ງຢືນນັ້ນ ໂດຍບໍ່ຈຳເປັນຂໍອະນຸຍາດນຳເງິນສົດອອກ ສປປ ລາວ ຕື່ມ. ສຳລັບຈຳນວນເງິນສ່ວນເກີນ ຕ້ອງຂໍອະນຸຍາດນຳກົມຄຸ້ມຄອງເງິນຕາຕ່າງປະເທດ ຫຼື ທຫລ ປະຈຳພາກ ເສຍກ່ອນ.

### ມາດຕາ 8 ເອກະສານປະກອບ

ເອກະສານປະກອບການຂໍອະນຸຍາດນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ມີດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງກົມຄຸ້ມຄອງເງິນຕາຕ່າງປະເທດ;
2. ຫຼັກຖານຢັ້ງຢືນແຫຼ່ງທີ່ມາຂອງເງິນ;
3. ເອກະສານ ຫຼື ຫຼັກຖານ ທີ່ກ່ຽວຂ້ອງກັບຈຸດປະສົງຂອງການນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ;

4. ໃບມອບສິດ ກໍລະນີແຕ່ງຕັ້ງຜູ້ຕາງໜ້າມາພົວພັນເອກະສານແທນຕົນ;

5. ເອກະສານອື່ນ ຕາມການກຳນົດຂອງກົມຄຸ້ມຄອງເງິນຕາຕ່າງປະເທດ.

ມາດຕາ 9 ການພິຈາລະນາ

ພາຍຫຼັງໄດ້ຮັບເອກະສານປະກອບການຂໍອະນຸຍາດນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ກົມຄຸ້ມຄອງເງິນຕາຕ່າງປະເທດ ຫຼື ທຫລ ປະຈຳພາກ ພິຈາລະນາອອກໃບອະນຸຍາດ ຫຼື ປະຕິເສດການຂໍອະນຸຍາດນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ພາຍໃນ ສາມວັນ ລັດຖະການ.

ກົມຄຸ້ມຄອງເງິນຕາຕ່າງປະເທດ ຫຼື ທຫລ ປະຈຳພາກ ອອກໃບອະນຸຍາດນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ຫາກເຫັນວ່າ:

1. ເປັນເງິນຂອງຜູ້ຂໍອະນຸຍາດ ຫຼື ເປັນຜູ້ໄດ້ຮັບສິດໃນການນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ຢ່າງຖືກຕ້ອງຕາມກົດໝາຍ;

2. ມີແຫຼ່ງທີ່ມາຂອງເງິນຢ່າງຖືກຕ້ອງຕາມກົດໝາຍ;

3. ມີຈຸດປະສົງໃນການນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ທີ່ຖືກຕ້ອງຕາມກົດໝາຍ;

4. ເອກະສານ ຫຼື ຫຼັກຖານ ທີ່ກ່ຽວຂ້ອງ ມີຄວາມສອດຄ່ອງກັບຈຸດປະສົງການນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ.

ຜູ້ທີ່ໄດ້ຮັບໃບອະນຸຍາດນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ຕ້ອງມາຮັບເອົາໃບອະນຸຍາດດັ່ງກ່າວ ພາຍໃນ ສິບວັນ ລັດຖະການ. ຖ້າເກີນກຳນົດເວລາດັ່ງກ່າວ ໃບອະນຸຍາດຈະຖືກຍົກເລີກ.

ມາດຕາ 10 ການນຳໃຊ້ໃບອະນຸຍາດ

ໃບອະນຸຍາດນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ສາມາດນຳໃຊ້ເປັນຫຼັກຖານແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ໃນການນຳເງິນສົດເງິນຕາຕ່າງປະເທດ ຕາມຈຳນວນເງິນທີ່ໄດ້ກຳນົດໄວ້ໃນໃບອະນຸຍາດນັ້ນອອກ ສປປ ລາວ ຊຶ່ງໃບອະນຸຍາດນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ສາມາດນຳໃຊ້ໄດ້ຄັ້ງດຽວ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນທີ່ໄດ້ກຳນົດໄວ້ໃນໃບອະນຸຍາດເທົ່ານັ້ນ ແລະ ມີອາຍຸການນຳໃຊ້ ພາຍໃນ ສາມສິບວັນ ນັບແຕ່ວັນທີ່ອອກໃບອະນຸຍາດນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ເປັນຕົ້ນໄປ ແລະ ບໍ່ສາມາດມອບ, ໂອນ ຫຼື ໃຫ້ບຸກຄົນ ຫຼື ນິຕິບຸກຄົນ ອື່ນນຳໃຊ້.

ມາດຕາ 11 ຄ່າທຳນຽມ

ຄ່າທຳນຽມການອອກໃບອະນຸຍາດນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ຈຳນວນ ສອງແສນ (200,000) ກີບ ໂດຍຊຳລະພາຍໃນວັນທີ່ມາຮັບໃບອະນຸຍາດດັ່ງກ່າວ.

## ໝວດທີ 4

## ສິດ ແລະ ໜ້າທີ່ ຂອງພາກສ່ວນທີ່ກ່ຽວຂ້ອງ

ມາດຕາ 12 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງເງິນຕາຕ່າງປະເທດ

ກົມຄຸ້ມຄອງເງິນຕາຕ່າງປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງການນຳເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ເພື່ອສະເໜີຂັ້ນເທິງພິຈາລະນາ ພ້ອມທັງຜັນຂະຫຍາຍນະໂຍບາຍ ແລະ ເຜີຍແຜ່ນິຕິກຳດັ່ງກ່າວ ໃຫ້ໄດ້ຮັບຜົນດີ;

2. ຄົ້ນຄວ້າອອກໃບອະນຸຍາດນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ພ້ອມທັງຕິດຕາມ ກວດກາ ການນຳໃຊ້ໃບອະນຸຍາດດັ່ງກ່າວ;

3. ເກັບກຳ, ສັງລວມ ແລະ ວິເຄາະ ຂໍ້ມູນ ກ່ຽວກັບການນຳເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ເພື່ອລາຍງານຂັ້ນເທິງ ຢ່າງເປັນປົກກະຕິ;

4. ປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ນຳໃຊ້ມາດຕະການຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້ ຕາມຂອບເຂດການຄຸ້ມຄອງຂອງຕົນ;

6. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບ ທຫລ ປະຈຳພາກ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຂອງຕົນ;

7. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບເຈົ້າໜ້າທີ່ພາສີ ໃນການຕິດຕາມ ກວດກາ ແລະ ນຳໃຊ້ມາດຕະການຕໍ່ຜູ້ລະເມີດລະບຽບການ ກ່ຽວກັບການນຳເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ພ້ອມທັງຊຸກຍູ້ເຈົ້າໜ້າທີ່ດັ່ງກ່າວ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງທະນາຄານແຫ່ງ ສປປ ລາວ ປະຈຳພາກ**

ທຫລ ປະຈຳພາກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ແລະ ເຜີຍແຜ່ ນະໂຍບາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງການນຳເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ຢູ່ບັນດາແຂວງທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;

2. ຄົ້ນຄວ້າອອກໃບອະນຸຍາດນຳເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ພ້ອມທັງຕິດຕາມ ກວດກາ ການນຳໃຊ້ໃບອະນຸຍາດດັ່ງກ່າວ ຢູ່ບັນດາແຂວງທີ່ຂຶ້ນກັບການຄຸ້ມຄອງຂອງຕົນ;

3. ເກັບກຳ, ສັງລວມ ແລະ ວິເຄາະ ຂໍ້ມູນ ກ່ຽວກັບການຄຸ້ມຄອງການນຳເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ເພື່ອລາຍງານຕໍ່ກົມຄຸ້ມຄອງເງິນຕາຕ່າງປະເທດ ເປັນປະຈຳເດືອນ ຫຼື ຕາມການສະເໜີ;

4. ປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ນຳໃຊ້ມາດຕະການຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້ ຕາມຂອບເຂດການຄຸ້ມຄອງຂອງຕົນ;

6. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ຂອງຕົນ;

7. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບເຈົ້າໜ້າທີ່ພາສີ ໃນການຕິດຕາມ ກວດກາ ແລະ ນຳໃຊ້ມາດຕະການຕໍ່ຜູ້ທີ່ລະເມີດລະບຽບການ ກ່ຽວກັບການນຳເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ຢູ່ບັນດາແຂວງທີ່ຂຶ້ນກັບການຄຸ້ມຄອງຂອງຕົນ ພ້ອມທັງຊຸກຍູ້ເຈົ້າໜ້າທີ່ດັ່ງກ່າວ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 14 ຂໍ້ຫ້າມ**

ຫ້າມຜູ້ມີ ຫຼື ບໍ່ມີ ພູມລຳເນົາ ຢູ່ ສປປ ລາວ ມີພຶດຕິກຳ ດັ່ງນີ້:

1. ນໍາໃຊ້ໃບອະນຸຍາດນໍາເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ ໂດຍບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

2. ປົກບັງ, ສະໜອງ ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ປອມແປງເອກະສານ ກ່ຽວກັບການຂໍອະນຸຍາດນໍາເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ;

3. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 15 ມາດຕະການຕໍ່ຜູ້ລະເມີດ**

ຜູ້ມີ ແລະ ບໍ່ມີ ພູມລໍາເນົາ ຢູ່ ສປປ ລາວ ທີ່ລະເມີດວຽກງານການນໍາເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ໃນແຕ່ລະກໍລະນີ ດັ່ງນີ້:

1. ການລະເມີດຂໍ້ 1 ຈະຖືກປັບໃໝ 10% (ສິບສ່ວນຮ້ອຍ) ຂອງວົງເງິນທີ່ໄດ້ຮັບອະນຸຍາດ;

2. ການລະເມີດຂໍ້ 2 ຈະຖືກປັບໃໝແຕ່ 10,000,000 (ສິບລ້ານ) ກີບ ຫາ 20,000,000 (ຊາວລ້ານ) ກີບ ພ້ອມທັງຈະຖືກຖອນໃບອະນຸຍາດນໍາເງິນສົດເງິນຕາຕ່າງປະເທດອອກ ສປປ ລາວ;

3. ການລະເມີດຂໍ້ 3 ຈະຖືກມາດຕະການ ຕາມກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 16 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ເປັນເຈົ້າການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ທຫລ ປະຈໍາພາກ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນເນື້ອໃນກ່ຽວກັບການເຄື່ອນໄຫວການນໍາເງິນສົດເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງວ່າດ້ວຍການເປີດບັນຊີເງິນຝາກ, ການໂອນເງິນ ແລະ ການນໍາເງິນສົດເຂົ້າ-ອອກ ສປປ ລາວ ສະບັບເລກທີ 454/ທຫລ, ລົງວັນທີ 30 ພຶດສະພາ 2019 ແລະ ໜັງສືແຈ້ງການການນໍາເງິນສົດ ເຂົ້າ-ອອກ ສປປ ລາວ ສະບັບເລກທີ 14/ທຫລ, ລົງວັນທີ 13 ກໍລະກົດ 2023.

ຜູ້ວ່າການ

ບຸນເຫຼືອ ສິນໄຊວໍລະວົງ